ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 12: Funny Stories (Con.)

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 5:** ນິທານຊວນຫົວ (ຕໍ່) ເວລາ: 90 ນາທີ
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

| | |
|---|---|
| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)** | |
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ເນື້ອໃນຂອງນິທານຊວນຫົວ<br>- ສິລະປະການແຕ່ງຂອງນິທານຊວນຫົວ | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ເນື້ອໃນຂອງນິທານຊວນຫົວ<br>- ສິລະປະການແຕ່ງຂອງນິທານຊວນຫົວ | **ຄຳຖາມຫຼັກ (Questions):**<br>1) ນິທານຊວນຫົວມີເນື້ອໃນຫຍັງແດ່?<br>2) ນິທານຊວນຫົວມີສິລະປະການປະດິດແຕ່ງຄືແນວໃດ? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງເນື້ອໃນ ແລະສິລະປະການປະດິດແຕ່ງ ຂອງນິທານຊວນຫົວ. | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງເນື້ອໃນ ແລະສິລະປະການປະດິດແຕ່ງ ຂອງນິທານຊວນຫົວ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ |

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

## ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)

- **ສື່ການສອນມີ:**

ປຶ້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ວັນນະຄະດີຊັ້ນມັດທະຍົມປີທີ5, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ.

- **ກິດຈະກຳການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງ ຄວາມໝາຍ, ຈຸດພິເສດ, ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານຊວນຫົວ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 5**
**ນິທານຊວນຫົວ (ຕໍ່)**

**3. ເນື້ອໃນຂອງນິທານຊວນຫົວ** ( 35 ນາທີ )

<u>**ກິດຈະກຳ 1:**</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ນິທານຊວນຫົວມີເນື້ອໃນຫຍັງແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (30 ນາທີ)

**3.1 ສ່ອງແສງການດຳລົງຊີວິດ, ການກະທຳທີ່ຜິດພາດຂອງປະຊາຊົນຜູ້ອອກແຮງງານ.**

ຢູ່ໃນການດຳລົງຊີວິດປະຈຳວັນ ຂອງຊາວຜູ້ອອກແຮງງານ ເປັນຕົ້ນ ແມ່ນການອອກແຮງງານ, ການທຳມາຫາກິນ ຕະຫລອດເຖິງແນວຄິດຈິດໃຈ, ການປາກເວົ້າ ແລະ ການເຄື່ອນໄຫວຕ່າງໆ ໄດ້ມີປາກົດການທີ່ດີ ແລະ ບໍ່ດີເກີດຂຶ້ນ, ບາງຄົນມີການເຄື່ອນໄຫວທີ່ຜິດປົກກະຕິ, ຫັນເຫອອກຈາກແບບແຜນການດຳລົງຊີວິດ ທີ່ຖືກຕ້ອງ, ຂັດກັບຮີດຄອງປະເພນີອັນດີງາມ ເຊິ່ງເຫັນວ່າຕ້ອງໄດ້ຕັກເຕືອນ ແລະ ບອກສອນ ຕິຕຽນສຽດສີແບບເບົາໆ ດ້ວຍສຽງຫົວ ເຊັ່ນ: ເລື່ອງ " ສີ່ໝອກ", ເລື່ອງ "ສອງສ່ຽວໄປລັກໄກ່"...

ການດຳລົງຊີວິດຂອງປະຊາຊົນ ເຂົາເຈົ້າໄດ້ພົບພໍ້ຫຼາຍບັນຫາ, ຫຼາຍເຫດການທີ່ຜິດພາດ, ບາງເທື່ອກໍສະແດງໃຫ້ເຫັນທາດແທ້ອັນບໍ່ດີຂອງປະຊາຊົນຜູ້ອອກແຮງງານເຊັ່ນ: ເລື່ອງ " ຕາບອດຄຳຊ້າງ" ເປັນການເຍາະເຍີ້ຍຄົນຈຳນວນໜຶ່ງທີ່ຖືວ່າ ຕົນເອງເປັນຜູ້ຮູ້ກວ່າໝູ່. ຄົນເຮົານັ້ນບໍ່ສາມາດຮູ້ໄດ້ທຸກຢ່າງ, ນອກນັ້ນການດຳລົງຊີວິດຂອງປະຊາຊົນເຄີຍມີປາກົດການທີ່ຜິດພາດຜິດປົດກະຕິ. ບົດເລື່ອງ: "ຕາບອດຄຳຊ້າງ" ເປັນບົດເລື່ອງສັ້ນເຂົ້າໃຈງ່າຍ ແຕ່ມີຄວາມໝາຍພຶດຕິກຳຕົວຈິງຢ່າງເລິກເຊິ່ງ. ເວົ້າລວມແລ້ວ ນິທານຊວນຫົວປະເພດຢອກໄຍກັນນີ້ເປັນບົດເລື່ອງທີ່ສັ້ນ, ເປັນການຕຳນິຕິເຕືອນ, ທັງມ່ວນຊື່ນທຳມະດາ ແຕ່ມັນມີຄວາມໝາຍສັ່ງສອນກໍ່ສ້າງກັນຂອງປະຊາຊົນຜູ້ອອກແຮງງານ.

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

**3.2 ສ່ອງແສງການຕຳນິຕິຕຽນ ການກະທຳທີ່ບໍ່ດີ ຂອງຄູບາອາຈານ, ພໍ່ຄ້າຊາວຂາຍ.**

ນິທານຊວນຫົວປະເພດສຽດສີ ມີຄວາມໝາຍເຍາະເຍີ້ຍສຽດສີ ແລະ ຕໍ່ສູ້ຢ່າງຈະແຈ້ງ. ຕົວລະຄອນທີ່ເປັນເປົ້າໝາຍຂອງສຽງຫົວໃນທີ່ນີ້ສ່ວນຫຼາຍເປັນພໍ່ຄ້າຊາວຂາຍ, ຄູບາອາຈານ ຫຼື ຜູ້ມີອຳນາດໃນບ້ານ ຫຼື ໃນທ້ອງຖິ່ນຕ່າງໆ ທີ່ມີແນວຄິດ ແລະ ການກະທຳ ອັນຜິດພາດກັບຮີດຄອງປະເພນີ, ຜິດຈາກທັດສະນະຄຸນສົມບັດຂອງປະຊາຊົນຜູ້ອອກແຮງງານຄື: ນິໄສຂີ້ຖີ່, ລັກໂລບ, ຫຼິ້ນແສ້ພານສາວ, ຄວາມໂລບມາກໂລພາ, ຕົວະຍົວະຫຼອກ ລ່ວງ , ຄວາມອວດອົ່ງທະນົງຕົວ ແລະ ອື່ນໆ.

ນິທານຊວນຫົວນີ້ເກີດຂຶ້ນ ແລະ ຂະຫຍາຍຕົວແຮງໃນເງື່ອນໄຂທີ່ສັງຄົມມີລັກສະນະສັບສົນ. ຄົນຈຳນວນໜຶ່ງ ມີຊີວິດຢູ່ດ້ວຍການຄິດໄລ່ຫາກິນບົນນ້ຳເຮື່ອນ້ຳແຮງຂອງຄົນອື່ນ. ດັ່ງນັ້ນ, ປະຊາຊົນຈຶ່ງໃຊ້ສຽງຫົວເພື່ອຕິຕຽນສຽດ ສີ ແລະ ຕໍ່ສູ້ກັບປາກົດການເຫຼົ່ານັ້ນຢ່າງສຸດຂີດ. ເມື່ອສາສະໜາພຸດໄດ້ແຜ່ເຂົ້າມາໃນລາວ ຊັ້ນນັກບວດ, ຄູບາອາ ຈານຜູ້ເປັນຂົວຕໍ່ລະຫວ່າງພະພຸດທະເຈົ້າກັບປະຊາຊົນ ໄດ້ນຳເອົາສິນທຳຈາກພະພຸດທະສາສະໜາມາເຜີຍແຜ່ໃນໝູ່ ມະຫາຊົນຢ່າງກວ້າງຂວາງ. ດັ່ງນັ້ນ, ປະຊາຊົນຈຶ່ງເຄົາລົບນັບຖືພະສົງສາມະເນນຢູ່ສະເໝີ. ແຕ່ກົງກັນຂາມກັບບົດບາດອັນສູງສົ່ງນັ້ນ ພັດມີພະສົງສາມະເນນຈຳນວນໜຶ່ງ ເຮັດຜິດຕໍ່ຫຼັກສິນທຳ ແລະ ທັດສະນະຄຸນສົມບັດຂອງປະຊາຊົນ ຄົນຈຳນວນນີ້ບໍ່ສົມກັບຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນ. ມີພະສົງບາງອົງ ເປັນຄົນໂລບມາກໂລພາ ເຫັນແກ່ເງິນ, ເຫັນແກ່ເຄື່ອງຢູ່ຂອງກິນ, ຂີ້ຖີ່…ຍິ່ງໄປກວ່ານັ້ນບາງອົງພັດຫຼິ້ນແສ້ຜ່ານສາວ ນີ້ແມ່ນປາກົດການທີ່ຫຍໍ້ທໍ້, ເຊື່ອມເສຍໃນຖັ້ນແຖວນັກບວດ. ດັ່ງນັ້ນ, ເລື່ອງ: “ ຍ່າພໍ່ຂີ້ຖີ່” , “ ຫົວພໍ່ໂລບມາກ ”, “ ຄົນຂີ້ຕົວະກັບຄົນຫຼອກລວງ ” ແລະ ອື່ນໆ. ບົດເລື່ອງທີ່ຍົກມານັ້ນມີໂຄງປະກອບສ້າງແບບກະທັດຮັດ, ໜັກແໜ້ນ ມີທັງຂໍ້ຂັດແຍ່ງອັນສົມເຫດສົມຜົນ ແລະ ສາມາດສະແດງໃຫ້ເຫັນເຖິງຄຸນສົມບັດອັນປອມແປງ ແລະ ເສຍສິນຂອງຄູບາອາຈານຈຳນວນໜຶ່ງ. ບົດເລື່ອງແບບນີ້ບໍ່ມີຫຼາຍປານໃດ ແຕ່ມັນກໍມີຄວາມໝາຍ, ຄວາມສຳຄັນທາງດ້ານສັງຄົມ ແລະ ຄຸນຄ່າສູງທາງດ້ານແນວຄິດໃນໝູ່ມະຫາຊົນທົ່ວໄປ. ບົດເລື່ອງເລົ່ານີ້ໄດ້ສະແດງໃຫ້ເຫັນວ່າ ປະຊາຊົນຜູ້ອອກແຮງງານມີຄວາມຮັບຮູ້ຢ່າງເລິກເຊິ່ງຕໍ່ການເຊື່ອຖືທາງສາສະໜາພຸດ, ຮູ້ຈຳແນກອັນໃດແມ່ນສິນທຳ, ອັນໃດແທ້ຈິງທີ່ຄູບາອາຈານຍຶດຖື ແລະ ອັນໃດແມ່ນສິນທຳແບບຈອມປອມ. ສະນັ້ນ, ປະຊາຊົນບໍ່ໄດ້ສະເພາະແຕ່ໄດ້ຕິຕຽນໃນນິທານຊວນຫົວເທົ່ານັ້ນ ຫາກຍັງໄດ້ແຕ່ງເປັນຄຳສຸພາສິດ ສຽດສີຕໍ່ຄູບາອາຈານຜູ້ເສຍສິນ, ເສຍວິໄນວ່າ: “ ຢາກຮັ່ງໃຫ້ລ້ຽງງົວຂາຍ ຢາກຈິບຫາຍໃຫ້ເອົາເຈົ້າຫົວມາລ້ຽງ”

**3.3 ນິທານຊວນຫົວແມ່ນອາວຸດທີ່ແຫຼມຄົມຂອງປະຊາຊົນ.**

ເມື່ອກ່າວມາເຖິງເວລາ ທີ່ສັງຄົມມີຊົນຊັ້ນ ໂດຍສະເພາະສະໄໝສັກດີນາ, ຊົນຊັ້ນສັກດີນາບໍ່ມີຄວາມສາມາດຈະນຳພາປະຊາຊົນໄດ້ອີກແລ້ວ, ນິທານຊວນຫົວທີ່ມີເນື້ອໃນຕໍ່ສູ້ຊົນຊັ້ນປົກຄອງນີ້ ສ່ວນຫຼາຍເປັນບົດທີ່ຍາວ ແລະມີຫຼາຍບັ້ນ, ຫຼາຍຕອນ ເວົ້າເຖິງຫຼາຍບັນຫາ ຢູ່ອ້ອມຂ້າງຕົວລະຄອນພະຍາເຊັ່ນ: ລະບົບນິທານຊຽງໝ້ຽງ. ໃນການຕໍ່ສູ້ກັບຊົນຊັ້ນປົກຄອງ, ໂດຍສະເພາະແມ່ນເຈົ້າພະຍາ, ຕົວລະຄອນຊຽງໝ້ຽງ ແລະ ຕົວລະຄອນ ອື່ນໆ ທີ່ເປັນຕົວແທນໃຫ້ແກ່ປະຊາຊົນ. ເບື້ອງຕົ້ນນັ້ນຈະຖືກທ່າຮັບທ່າປະລາໄຊ ແຕ່ສຸດທ້າຍກໍກ້າວໄປເຖິງບ່ອນບຸກໂຈມຕີກາຍເປັນຜູ້ເອົາຊະນະ, ສ່ວນຕົວລະຄອນພະຍາ ຜູ້ເປັນສັນຍາລັກໃຫ້ແກ່ຊົນຊັ້ນປົກຄອງ ພັດສະແດງຕົວເປັນຄົນໂງ່ຈ້າອັບປັນຍາຖືກຊຽງໝ້ຽງຈຳໃຊ້ ແລະ ບັນຊາຢູ່ສະເໝີບໍ່ຕ່າງຫຍັງກັບຫຸ່ນ. ການປັ້ນແຕ່ງຕົວລະຄອນສອງຝ່າຍທີ່ມີ

ນິໄສການປະພຶດຂັດແຍ່ງ ແລະ ກົງກັນຂ້າມກັນ, ເຊິ່ງບໍ່ເຄີຍມີໃນຊີວິດຕົວຈິງທີ່ໄດ້ກ່າວມາພາໃຫ້ເກີດ ສຽງຫົວອັນເພິ່ງພໍໃຈສຳລັບຜູ້ຟັງ, ອັນຕົວຈິງແລ້ວ ເປັນເລື່ອງເຫຼືອເຊື່ອທີ່ພະຍາຜູ້ໜຶ່ງຈະໂງ່ຈ້າເຖິງຂັ້ນຖືກຊຽງໜ້ຽງ ຕົວະຕົ້ມໃຫ້ລົງໜອງ ແລະ ກິນຂີ້ແຮ້ງ ແລະ ອື່ນໆ ແຕ່ຄວາມສາມປະດິດແຕ່ງຂອງປະຊາຊົນຜູ້ອອກແຮງງານເຮັດໃຫ້ຕົວລະຄອນທີ່ມີສິດອຳນາດເຄັ່ງຂຶມໃນສັງຄົມຄືພະຍານັ້ນກັບກາຍມາເປັນເຄື່ອງຫຼິ້ນ, ເປັນຕົວລະຄອນຕະຫຼົກຢ່າງສົມເຫດສົມຜົນຈົນກາຍເປັນເປົ້າໝາຍຂອງສຽງຫົວສຽດສີທີ່ມີລັກສະນະໂຈມຕີ ແລະ ປະຕິເສດ.

**3.4 ສ່ອງແສງເຖິງຄວາມສະຫຼາດ ສະຫຼຽວຂອງປະຊາຊົນ.**

ນິທານຊວນຫົວ ແມ່ນໝາກຜົນປະດິດແຕ່ງຂອງປະຊາຊົນຜູ້ອອກແຮງງານ, ຊຽງໜ້ຽງ ແລະ ຕົວລະຄອນອື່ນໆ ທີ່ຍົກຂຶ້ນມາກໍເປັນການເຍາະເຍີ້ຍສຽກສີທັງສະແດງໃຫ້ເຫັນເຖິງຄວາມສະຫຼາດມີພິບໄຫວ ຄວາມສາມາດຂອງປະຊາຊົນຜູ້ອອກແຮງງານ ທີ່ຍາມໃດກໍຫວັງແຕ່ເອົາຊະນະກັບຊົນຊັ້ນປົກຄອງ. ຢູ່ໃນບັນດາເລື່ອງຕະລົກຊວນຫົວຕ່າງໆນັ້ນ ໄດ້ເປັນການຍົກຖານະບົດບາດຂອງປະຊາຊົນຜູ້ຖືກກົດຂີ່ຂູດຮີດໃຫ້ສູງຂຶ້ນ.

ຕົວລະຄອນຊຽງໜ້ຽງ, ທ້າວໂປ້...ລ້ວນແຕ່ແມ່ນຮູບພາບສັນຍາລັກຂອງປະຊາຊົນຜູ້ອອກແຮງງານ. ຄວາມສະຫຼຽວສະຫຼາດ ສະຕິປັນຍາທີ່ສ້ຽມແຫຼມຂອງຊຽງໜ້ຽງ, ທ້າວໂປ້ ລ້ວນແຕ່ແມ່ນສະຕິປັນຍາທີ່ສັ່ງລວມມາຈາກປະຊາຊົນ, ເບື້ອງຕົ້ນເຮົາຈະເຫັນວ່າ ຕົກລະຄອນເອກຈະຕົກຢູ່ໃນທ່າຮັບ ແຕ່ສຸດທ້າຍກໍແກ້ໄຂບັນຫາດ້ວຍໄຊຊະນະ. ຮູບພາບຂອງພະຍາພ້ອມໂຄດວົງ ເຂົ້າໄປນອນຢູ່ໃນຂຸມເພື່ອໃຫ້ທ້າວໂປ້ເອົາດິນໄປຖົມ ແລ້ວສິ່ງໄປຫາພໍ່ແມ່ ທີ່ເມືອງມະຫັບມະຫາຍ ຫຼືຮູບພາບຂອງພະຍາ ທີ່ເປືອຍຕົວ ຫຼືຢືນສັ່ນໜາວຢູ່ກາງໜອງ ຄອງໃຫ້ຊຽງໜ້ຽງຕົວະຂຶ້ນຈາກໜອງ. ທັງໝົດນີ້ລ້ວນແຕ່ສະແດງໃຫ້ເຫັນວ່າ ພະຍາໂງ່ຈ້າ ແລະ ຊຽງໜ້ຽງ, ທ້າວໂປ້ ສະຫຼາດສ້ຽມແຫຼມກວ່າຈິ່ງເຮັດໃຫ້ໄດ້ຮັບໄຊຊະນະ (ກຽງແກ້ວ ນວນນະວົງ ແລະຄະນະ, 2002).

**4. ສິລະປະການປະດິດແຕ່ງຂອງນິທານຊວນຫົວ** (25 ນາທີ)

**<u>ກິດຈະກຳ 2:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ນິທານຊວນຫົວມີສິລະປະການປະດິດແຕ່ງຄືແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (20 ນາທີ)

ສິລະປະການປະດິດແຕ່ງຂອງນິທານຊວນຫົວຕົ້ນຕໍ ແມ່ນການໃຊ້ສຽງຫົວ, ເຊິ່ງປະກອບດ້ວຍການໃຊ້ຄຳເວົ້າເຍາະເຍີ້ຍສຽດສີຕິຕຽນ, ກ່າວປະນາມຕໍ່ການປະພຶດ, ປາກົດການ ແລະບັນຫາອື່ນໆ ທີ່ເປັນຕາຢາກຫົວພ້ອມໆກັບກັບການເວົ້າໂຍກເກີນຕົວຈິງເພື່ອໃຫ້ເລື່ອງເດັ່ນ, ເມື່ອອ່ານແລ້ວຕ້ອງເກີດສຽງຫົວ.

ນິທານຊວວນຫົວ ແມ່ນບົດລະຄອນຕະຫຼົກປະເພດໜຶ່ງ ທີ່ມີຂໍ້ຂັດແຍ່ງທາງສັງຄົມ ແລະ ມີການຂະຫຍາຍຕົວໃນລະດັບສູງ ເມື່ອຂໍ້ຂັດແຍ່ງນັ້ນຖືກແກ້ໄຂດ້ວຍຄວາມບັງເອີນຈິ່ງພາໃຫ້ເກີດມີສຽງຫົວເຍາະເຍີ້ຍ ແລະສຽດສີເຊັ່ນ: ຕົວລະຄອນພະຍາ, ເຈົ້າຂຸນມູນນາຍເຊິ່ງເປັນຕົວແທນໃຫ້ແກ່ຊົນຊັ້ນປົກຄອງ ໄດ້ກາຍເປັນເປົ້າໝາຍໂຈມຕີ ກ່າວປະນາມຂອງນິທານຊວນຫົວ. ຍິ່ງໄປກວ່ານັ້ນ, ບາງຕົວລະຄອນເຈົ້າຊີວິດຜູ້ສູງສັກປຽບເໝືອນພະຍາແຖນກໍຖືກນຳມາເຍາະເຍີ້ຍຄືກັນກັບຕົວລະຄອນອື່ນໆ. ການຜັນແປຂອງບັ້ນ ແລະ ຕອນຕ່າງໆໃນນິທານຊວນຫົວ

ໄດ້ສະແດງໃຫ້ເຫັນເຖິງນິໄສໃຈຄໍ ແລະ ຄວາມສະຫຼາດຫຼັກແຫຼມຂອງບັນດາຕົວລະຄອນ. ໃນການຕໍ່ສູ້ກັບພະຍານັ້ນ, ຕົວລະຄອນຊຽງໝ້ຽງຕົວລະຄອນກາພ້າ ແລະ ຕົວລະຄອນອື່ນໆທີ່ເປັນຕົວແທນຂອງປະຊາຊົນຜູ້ອອກແຮງງານເບື້ອງຕົ້ນເປັນຝ່າຍເສຍປຽບ, ແຕ່ຕອນສຸດທ້າຍ ກໍກາຍເປັນຜູ້ຊະນະຢູ່ສະເໝີ.

ຕົວລະຄອນພະຍາເປັນຄົນໂງ່ຈ້າອັບປັນຍາ ບໍ່ສາມາດເອົາຊະນະຊຽງໝ້ຽງທີ່ເປັນປະຊາຊົນຜູ້ອອກແຮງງານໄດ້, ສຸດທ້າຍຄວາມໂງ່ຈ້າຂອງພະຍາເປັນສິລະປະສຽງຫົວຂອງນິທານຊວນຫົວ, ການປັ້ນແຕ່ງຕົວລະຄອນສອງຝ່າຍທີ່ມີສີໄສ ແລະການປະພຶດຂັດແຍ່ງ ແລະ ກົງຂ້າມກັນເປັນສາເຫດອັນໜຶ່ງທີ່ພາໃຫ້ເກີດມີສຽງຫົວອັນເພິ່ງພໍໃຈສຳລັບຜູ້ຟັງ (ບຸນລ້ອມ ສີບຸນເຮືອງ ແລະຄະນະ, 2014).

- ນິທານຊວນຫົວ ແມ່ນປະເພດເລື່ອງ ທີ່ນຳໃຊ້ສຽງຫົວ ສະແດງເນື້ອໃນຄວາມໝາຍອອກ ເພື່ອເຍາະເຍີ້ຍສຽດສີ ການກະທຳທີ່ບໍ່ດີຂອງຄົນເຮົາ. ມີຫຼາຍປະເທດໃກ້ຄຽງທີ່ມີເລື່ອງເຊິ່ງມີໂຄງສ້າງ ແລະ ຄວາມໝາຍຄ້າຍຄືກັນກັບເລື່ອງຂອງລາວ ເຊັ່ນ: ຢູ່ຫວຽດນາມ ມີເລື່ອງ " ຈາງກວິງ", ຢູ່ກຳປູເຈຍ ມີເລື່ອງ " ທະເມັນໃຈ", ຢູ່ໄທ ມີເລື່ອງ " ສີທະນົນໄຊ"... ນັ້ນຄືງແມ່ນໝາກຜົນ ແລະ ຈຸດພິເສດຂອງການພົວພັນ ດ້ານວັດທະນະທຳ ທີ່ເຄີຍມີມາໃນຂົງເຂດນີ້.

- ການເວົ້າໂຍກ ແມ່ນສິລະປະຢ່າງໜຶ່ງຂອງນິທານຊວນຫົວ. ສິ່ງທີ່ເປັນປົກກະຕິກໍເຮັດໃຫ້ເກີດສຽງຫົວໄດ້ແຕ່ຖ້າຜິດປົກກະຕິກໍແຮ່ງເຮັດໃຫ້ສຽງຫົວດັງແຮງຂຶ້ນ. ດັ່ງນັ້ນ, ເພື່ອຢາກເຮັດສິ່ງໃດໜຶ່ງກາຍເປັນຜິດປົກກະຕິ ກໍຕ້ອງໄດ້ເວົ້າໂຍກ, ເພີ່ມເຕີມ ເຊິ່ງຍັງເຮັດໃຫ້ບົດມີລົດຊາດເຂັ້ມຂຸ້ນ, ມີຊີວິດຊີວາຂຶ້ນຕື່ມອີກ. ອາດເວົ້າໄດ້ວ່າ: ນິທານຊວນຫົວ ແມ່ນການພັນລະນາຕົວຈິງ ດ້ວຍສິລະປະເວົ້າໂຍກ (ພູວົງ ໝໍ່ດາລາ ແລະຄະນະ, 2018).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
  - ເນື້ອໃນຂອງນິທານຊວນຫົວ
  - ສິລະປະການແຕ່ງຂອງນິທານຊວນຫົວ

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນຳນັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**ເອກະສານອ້າງອີງ**

ກຽງແກ້ວ ນວນນະວົງ ແລະຄະນະ. (2002). ວັນນະຄະດີພື້ນເມືອງ 1. ລະຫັດ 630LLI 322. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ.

ບຸນລ້ອມ ສີບຸນເຮືອງ ແລະຄະນະ. (2014). ແບບຮຽນວັນນະຄະດີ ຊັ້ນມັດທະຍົມສຶກສາປີທີ 5. ກະຊວງສຶກສາທິການ ແລະກິລາ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ພູວົງ ໜໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈຳວິຊາ



ປທ. ສົມທະເພີຍ ສີວົງສັກ